ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື
ພະແນກອຸດສາຫະກຳ ແລະ ການຄ້າ
(ຄະນະກຳມະການປະມູນຂາຍໄມ້ຍືດຂັ້ນແຂວງ)

ເລກທີ.1372./ອຄ.ອປ
ອັດຕະປື, ວັນທີ.21..ທັນວາ.2018

## ແຈ້ງການປະມູນ

ເຖິງ : ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສຳເລັດຮູບທົ່ວປະເທດ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ບ້ວງໄມ້ຍຶດຂອງແຂວງ ຈຳນວນ 01 ບັນຊີ ເທົ່າກັບ 230 ຕົບ, ບໍລິມາດ : 20,882 ມ3 ( ຊາວຈຸດແປດແປດສອງແມັດກ້ອນ ).

- ອີງຕາມ ຄຳສັ່ງ ເລກທີ່ 15/ນຍ, ລົງວັນທີ່ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຂໍ້ຕົກລົງ ເລກທີ 0918/ອຄ.ຈພງ, ວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1258/ຈຂ.ອປ, ລົງວັນທີ 19/12/2016. ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນຂາຍໄມ້ ສົກປີ 2016 - 2017.
- ອີງຕາມຄຳສັ່ງແນະນຳເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນຳການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມສະໂນດນຳສົ່ງບັນຊີໄມ້ສະໜາມ II ສະບັບເລກທີ 931/ກງຂ, ລົງວັນທີ 18 ທັນວາ 2018.

ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ ( ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສຳເລັດຮູບ ພາຍໃນແຂວງແລະຕ່າງແຂວງທົ່ວປະເທດ ເພື່ອເຂົ້າປະມູນຊື້ໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດ ດັ່ງນີ້ :

I. **ໄມ້ຍຶດຂອງແຂວງ ທີ່ຈະປະມູນຂາຍ ມີຈຳນວນທັງໝົດ 01 ບັນຊີ ເທົ່າກັບ 230 ຕົບ, ບໍລິມາດ: 20,882** ແມັດກ້ອນ ( ຊາວຈຸດແປດແປດສອງແມັດກ້ອນ ). ໃນນັ້ນມີ :
   - ໄມ້ດູ່ຕົບ ບໍລິມາດ: 20,882 ແມັດກ້ອນ ( ຊາວຈຸດແປດແປດສອງແມັດກ້ອນ ).

II. **ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.**

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ລຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.
2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ຂໍ້ຕົກລົງສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ ( ສະບັບປັບປຸງ ).
3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

**III. ວັນເວລາເປີດເປີດຂາຍຊອງປະມູນ.**

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 10 ວັນລັດຖະການ (ນັບແຕ່ວັນທີ 24/12/2018–07/01/2019 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 08/01/2019.
- ສະຖານທີ່ : **ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.**
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 08/01/2019, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : **ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື,** ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

**ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.**

**( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )**

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ອັດຕະປື

ສັນຕິໄຊ ສີລືໄຊ

SANTISAY SILEUSAY